**ມິຊຊາອາທິດທີ 3 ກຳນົດບຳເພັນສິນ**

**ວັນທີ 20 ມີນາ 2022**



**ພຣະວໍລະສານນັກບຸນລູກາ 13, 1-9**

ໃນເວລານັ້ນ, ມີຄົນມາເລົ່າເລື່ອງທີ່ເປັນມາແກ່ຊາວກາລີເລໃຫ້ພຣະເຢຊູເຈົ້າຟັງວ່າ: ປີລາໂຕໄດ້ເອົາເລືອດຂອງພວກເຂົາມາປົນໃສ່ກັບເຄື່ອງບູຊາທີ່ພວກເຂົາຖະຫວາຍ. ພຣະເຢຊູເຈົ້າຕອບວ່າ: ພວກເຈົ້າຄິດວ່າຊາວກາລີເລເຫລົ່ານັ້ນໄດ້ທຳຜິດຫລາຍກວ່າຊາວກາລີເລອື່ນບໍ? ຈຶ່ງຕ້ອງຖືກໂທດດັ່ງນີ້? ເຮົາບອກພວກເຈົ້າວ່າ ບໍ່ແມ່ນດັ່ງນີ້ດອກ. ແຕ່ວ່າຖ້າພວກເຈົ້າບໍ່ກັບຈິດປ່ຽນໃຈ, ພວກເຈົ້າກໍຈະຕາຍພິນາດໝົດສິ້ນດັ່ງດຽວກັນ. ແລະພວກສິບແປດຄົນທີ່ຫໍຊີໂລເອລົ້ມທັບຕາຍນັ້ນ, ພວກເຈົ້າຄິດວ່າເຂົາເປັນຄົນບາບຫລາຍກວ່າຊາວເຢລູຊາແລມອື່ນບໍ? ເຮົາບອກພວກເຈົ້າວ່າ ບໍ່ແມ່ນດັ່ງນັ້ນດອກ. ພວກເຈົ້າກໍດັ່ງດຽວກັນ, ຖ້າບໍ່ກັບຈິດປ່ຽນໃຈ ພວກເຈົ້າກໍຈະຕາຍໝົດທຸກຄົນ.

ແລ້ວພຣະອົງກ່າວຄຳປຽບທຽບຕໍ່ໄປນີ້ວ່າ: ມີຄົນຜູ້ໜຶ່ງໄດ້ປູກກົກເດື່ອໄວ້ໃນສວນຂອງຕົນກົກໜຶ່ງ. ເມື່ອເວລາອອກມາເກັບໝາກ ກໍບໍ່ເຫັນມີ. ເຂົາເລີຍເວົ້າກັບຄົນທຳສວນນັ້ນວ່າ: ໄດ້ສາມປີແລ້ວ, ເຮົາມາເກັບໝາກຈາກກົກເດື່ອນີ້ແຕ່ບໍ່ມີໝາກ. ຈົ່ງປ້ຳມັນຖິ້ມເສຍຣົກດິນລ້າໆ. ຄົນທຳສວນຕອບວ່າ: ນາຍເອີຍ! ຂ້ານ້ອຍຂໍລອງເບິ່ງອີກປີໜຶ່ງກ່ອນ, ຂ້ານ້ອຍຈະແປງດິນອ້ອມກົກມັນແລະໃສ່ຝຸ່ນເບິ່ງ, ລາງເທື່ອປີໜ້າມີໝາກກໍບໍ່ຈັກ. ຖ້າບໍ່ເປັນດັ່ງນັ້ນ, ຂໍໃຫ້ທ່ານສັ່ງໃຫ້ປ້ຳມັນຖິ້ມເສຍ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວາຈາພຣະເຈົ້າວັນອາທິດນີ້ກ່າວເຖິງດວງພຣະໄທທີ່ເຕັມພຽບດ້ວຍຄວາມຮັກເມດຕາຂອງພຣະເຈົ້າທີ່ມີຕໍ່ພວກເຮົາ. ແລະຄວາມຮັກທີ່ພຣະອົງມີຕໍ່ພວກເຮົານັ້ນແມ່ນການທີ່ພຣະອົງປາດຖະໜາໃຫ້ພວກເຮົາໄດ້ຮັບຊີວິດນັ້ນເອງ.

ດັ່ງໃນບົດອ່ານທີໜຶ່ງຈາກໜັງສືອົບພະຍົບ, ເມື່ອພຣະເຈົ້າປະຈັກມາໃຫ້ໂມແຊເຫັນໃນພຸ່ມໄມ້ທີ່ພວມລຸກໄໝ້ຢູ່ນັ້ນ, ພຣະອົງກ່າວກັບໂມແຊວ່າ: "ເຮົາແມ່ນພຣະເຈົ້າຂອງອາບຣາຮາມ, ຂອງອີຊາອັກແລະຂອງຢາໂກ້ອບ". ໝາຍວ່າພຣະອົງເປັນພຣະເຈົ້າຂອງພວກຜູ້ເປັນບໍ່ແມ່ນພວກຜູ້ຕາຍ. ແລະສິ່ງທີ່ພຣະອົງປາດຖະໜາໃຫ້ປະກອນອິສຣາແອນຂອງພຣະອົງໄດ້ຮັບແມ່ນຊີວິດນັ້ນເອງ.

ສ່ວນໃນພຣະວໍລະສານ, ພຣະເຢຊູເຈົ້າກໍສະແດງຄວາມຮັກເມດຕາຂອງພຣະອົງອອກມາ ຜ່ານທາງການໃຫ້ເວລາກັບພວກເຮົາເພື່ອພວກເຮົາຈະໄດ້ກັບມາຫາພຣະອົງແລະມີຊີວິດ. ດັ່ງທີ່ພຣະເຢຊູເຈົ້າໃຊ້ຄວາມປຽບທຽບໃນວັນນີ້ວ່າ: ເມື່ອເຈົ້າຂອງສວນເຫັນກົກໝາກເດື່ອທີ່ປູກເປັນເວລາສາມປີແລ້ວແຕ່ບໍ່ໃຫ້ໝາກຜົນຫຍັງ. ເພິ່ນກໍຢາກປໍ້າມັນຖິ້ມເສຍ. ແຕ່ຄົນທຳສວນວອນຂໍເຈົ້າຂອງສວນໃຫ້ລໍຖ້າໄປອີກກ່ອນ, ບາງທີກົກເດື່ອນັ້ນອາດຈະໃຫ້ໝາກຜົນກໍເປັນໄດ້. ຄົນທຳສວນໃນທີ່ນີ້ແມ່ນພຣະເຢຊູເຈົ້າທີ່ວອນຂໍພຣະບິດາຜູ້ເປັນເຈົ້າຂອງສວນໃຫ້ລໍຖ້າອີກຈັກໜ່ອຍ ເພື່ອວ່າວັນໜຶ່ງພວກເຮົາອາດຈະກັບໃຈມາຫາພຣະອົງແລະມີຊີວິດກໍເປັນໄດ້. ສິ່ງນີ້ແລ, ສະແດງອອກເຖິງຄວາມຮັກທີ່ພຣະເຢຊູເຈົ້າມີຕໍ່ພວກເຮົາແຕ່ລະຄົນ. ຍ້ອນພຣະອົງບໍ່ປາດຖະໜາໃຫ້ພວກເຮົາຈິບຫາຍວາຍວອດ, ແຕ່ໃຫ້ພວກເຮົາມີຊີວິດແລະແມ່ນຊີວິດທີ່ໝັ້ນຄົງຖາວອນ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດປ່ຽນດວງໃຈທີ່ແຂງດື້ຂອງລູກໃຫ້ເປັນດວງໃຈທີ່ອ່ອນນ້ອມແລະເຕັມດ້ວຍຄວາມຮັກເໝືອນກັບພຣະອົງ. ເພື່ອລູກຈະໄດ້ຮູ້ຈັກກັບຈິດປ່ຽນໃຈແລະຫັນມາຫາຄວາມຮັກເມດຕາຂອງພຣະອົງທີ່ມີຕໍ່ລູກດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ